**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ 0902/ກປ

ນະຄອນຫຼວງວຽງຈັນ, ວັນທີ 16 JUL 2021

# ຂໍ້ຕົກລົງ
## ວ່າດ້ວຍ ການວັດແທກໄມ້ທ່ອນ, ຕໍໄມ້, ປູດໄມ້, ໄມ້ເປັນພະລັງງານ ແລະ ການຈັດຊັ້ນຄຸນນະພາບໄມ້ທ່ອນ

- ອີງຕາມ ກົດໝາຍ ວ່າດ້ວຍປ່າໄມ້ ເລກທີ 64/ສພຊ, ລົງວັນທີ 13 ມິຖຸນາ 2019;
- ອີງຕາມ ດຳລັດ ຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ເລກທີ 99/ນຍ, ລົງວັນທີ 09 ມີນາ 2017;
- ອີງຕາມ ໜັງສືສະເໜີ ຂອງກົມປ່າໄມ້ ເລກທີ 1742/ກປມ, ລົງວັນທີ 18 ມີນາ 2021;
- ອີງຕາມ ໜັງສືສະເໜີ ຂອງກົມນະໂຍບາຍ ແລະ ນິຕິກຳ ເລກທີ 0335/ກນບ, ລົງວັນທີ 25 ມິຖຸນາ 2021.

**ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກຂໍ້ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດ ຫຼັກການ, ລະບຽບການ ກ່ຽວກັບ ການວັດແທກໄມ້ທ່ອນ, ຕໍໄມ້, ປູດໄມ້, ໄມ້ເປັນພະລັງງານ ແລະ ການຈັດຊັ້ນຄຸນນະພາບໄມ້ທ່ອນ ເພື່ອໃຫ້ຖືກຕ້ອງຕາມເຕັກນິກວິຊາການ ແນໃສ່ຮັບປະກັນຄວາມເປັນເອກະພາບ ໃນການຈັດຕັ້ງປະຕິບັດ.

**ມາດຕາ 2 ການວັດແທກໄມ້ທ່ອນ, ຕໍໄມ້, ປູດໄມ້, ໄມ້ເປັນພະລັງງານ ແລະ ການຈັດຊັ້ນຄຸນນະພາບໄມ້ທ່ອນ**

ການວັດແທກໄມ້ທ່ອນ, ຕໍໄມ້, ປູດໄມ້, ໄມ້ເປັນພະລັງງານ ແມ່ນ ການຊອກຫາຂະໜາດໜ້າຕ້າງ, ລວງຍາວ ຫຼື ລວງສູງ ເພື່ອຄິດໄລ່ບໍລິມາດຂອງໄມ້ທ່ອນ, ຕໍໄມ້, ປູດໄມ້ ແລະ ໄມ້ເປັນພະລັງງານ ໂດຍໃຊ້ຫົວໜ່ວຍເປັນ ຊັງຕີແມັດ.

ການຈັດຊັ້ນຄຸນນະພາບໄມ້ທ່ອນ ແມ່ນ ການກຳນົດປະເພດໄມ້ທ່ອນ ທີ່ໄດ້ຜ່ານການວັດແທກ ແລະ ເກັບກຳຕຳໜິປະເພດຕ່າງໆຂອງໄມ້ທ່ອນ ເພື່ອຈັດຊັ້ນຄຸນນະພາບ ຊຶ່ງປະກອບດ້ວຍປະເພດ ກ, ຂ, ຄ ແລະ ນອກປະເພດ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໄມ້ທ່ອນ** ໝາຍເຖິງ ໄມ້ທີ່ຖືກບັ່ນທ່ອນຈາກຕົ້ນໄມ້ທີ່ໄດ້ຕັດປົ້ງ ຊຶ່ງມີຂະໜາດໜ້າຕ້າງ ແລະ ລວງຍາວແຕກຕ່າງກັນ ໂດຍມີລວງຍາວ ໜຶ່ງ ແມັດ ຂຶ້ນໄປ ແລະ ໜ້າຕ້າງ ສິບແປດ ຊັງຕີແມັດ ຂຶ້ນໄປ;
2. **ຕໍໄມ້** ໝາຍເຖິງ ສ່ວນທີ່ເຫຼືອຂອງລຳຕົ້ນ ຊຶ່ງຕິດກັບຮາກ ແລະ ລວມເອົາທັງລະບົບຮາກທີ່ປະຖິ້ມໄວ້ພາຍຫຼັງທີ່ຕັດເອົາລຳຕົ້ນແລ້ວ. ໃນກໍລະນີຕໍໄມ້ບໍ່ມີລະບົບຮາກທີ່ຕິດຢູ່ນັ້ນ ຖືວ່າເປັນໄມ້ທ່ອນ, ລວງຍາວຂອງໄມ້ທ່ອນຕິດກັບຕໍບໍ່ໃຫ້ເກີນ ໜຶ່ງຮ້ອຍສາມສິບ ຊັງຕີແມັດ ຊຶ່ງເລີ່ມແຕ່ຈຸດແບ່ງຮາກສູງສຸດ;
3. **ປຸດໄມ້** ໝາຍເຖິງ ເນື້ອໄມ້ ທີ່ຈະເລີນເຕີບໂຕຜິດປົກກະຕິ ໂດຍທຳມະຊາດ ຊຶ່ງມີຮູບຮ່າງລັກສະນະເປັນປຸດ ຫຼື ເປັນໂບນ ຕິດກັບລຳຕົ້ນ;
4. **ໄມ້ເປັນພະລັງງານ** ໝາຍເຖິງ ໄມ້ທີ່ນຳໃຊ້ເປັນວັດຖຸເຊື້ອໄຟ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວກ່ຽວກັບວຽກງານປ່າໄມ້ ແລະ ທຸລະກິດໄມ້ ຢູ່ ສປປ ລາວ.

## ໝວດທີ 2
## ການວັດແທກ, ເກັບກຳຕຳໜິ ແລະ ຈັດຊັ້ນຄຸນນະພາບໄມ້ທ່ອນ

**ມາດຕາ 5 ການວັດແທກ, ເກັບກຳຕຳໜິ ແລະ ຈັດຊັ້ນຄຸນນະພາບໄມ້ທ່ອນ**

ການວັດແທກ, ເກັບກຳຕຳໜິ ແລະ ຈັດຊັ້ນຄຸນນະພາບໄມ້ທ່ອນ ປະກອບດ້ວຍຂັ້ນຕອນ ດັ່ງນີ້:

1. ຂະໜາດໄມ້ທ່ອນ ທີ່ຈັດຊັ້ນຄຸນນະພາບ;
2. ການວັດແທກໜ້າຕ້າງ;
3. ການວັດແທກລວງຍາວ;
4. ການຄິດໄລ່ບໍລິມາດໄມ້ທ່ອນ;
5. ການວັດແທກໂກນ ຫຼື ໃຈເນົ່າ;
6. ການຄິດໄລ່ບໍລິມາດໄມ້ທ່ອນໂກນ ຫຼື ເນົ່າ;
7. ການວັດແທກ ແລະ ເກັບກຳຕຳໜິ;
8. ການກຳນົດຕຳໜິປະເພດຕ່າງໆ ຂອງໄມ້ທ່ອນ;
9. ການຈັດຊັ້ນຄຸນນະພາບໄມ້ທ່ອນ.

**ມາດຕາ 6 ຂະໜາດໄມ້ທ່ອນ ທີ່ຈັດຊັ້ນຄຸນນະພາບ**

ຂະໜາດໄມ້ທ່ອນ ທີ່ຈັດຊັ້ນຄຸນນະພາບ ແມ່ນ ການກຳນົດຂະໜາດໜ້າຕ້າງ ແລະ ລວງຍາວ ຂອງໄມ້ ເພື່ອເປັນບ່ອນອີງໃຫ້ແກ່ການວັດແທກ, ຄິດໄລ່ບໍລິມາດ ແລະ ຈັດຊັ້ນຄຸນນະພາບ ດັ່ງນີ້:

| ລ/ດ | ຊື່ພາສາລາວ<br>Lao name | ຊື່ວິທະຍາສາດ<br>Scientific name | ຂະໜາດໄມ້ທ່ອນ ທີ່ຈັດຊັ້ນຄຸນນະພາບ | |
|---|---|---|---|---|
| | | | ໜ້າຕ້າງ (ຊມ)<br>(Diameter ≥...) | ລວງຍາວ (ຊມ)<br>(Length ≥...) |
| 1 | ໄມ້ຂະຍຸງ | *Dalbergia cochinchinensis* | 20 | 100 |
| 2 | ໄມ້ຄຳພີເຂົາຄວາຍ | *Dalbergia cultrata* | 20 | 100 |
| 3 | ໄມ້ຄຳພີ ຫຼື ໄມ້ປະດົງ | *Dalbergia oliveri* | 20 | 100 |
| 4 | ໄມ້ກະບົ້ ຫຼື ໄມ້ນາງນວນ | *Dalbergia lanceolaria* | 20 | 100 |
| 5 | ໄມ້ກະຈະ | *Erythrophleum fordii* | 25 | 100 |

| | | | | |
|---|---|---|---|---|
| 6 | ໄມ້ໝູນ | *Diospyros mun* | 25 | 100 |
| 7 | ໄມ້ລາງດຳ ຫຼື ໄມ້ໝັງດຳ | *Diospyros malabarica* | 25 | 200 |
| 8 | ໄມ້ດູ່ລາຍ | *Dalbergia odorifera* | 18 | 100 |
| 9 | ໄມ້ດູ່ເລືອດ | *Pterocarpus macrocapus* | 25 | 100 |
| 10 | ໄມ້ດູ່ເຫຼືອງ | *Pterocarpus pedatus* | 25 | 100 |
| 11 | ໄມ້ແດງ | *Xylia xylocarpa* | 25 | 200 |
| 12 | ໄມ້ແຕ້ຄ່າ | *Afzelia xylocarpa* | 25 | 100 |
| 13 | ໄມ້ສັກ | *Tectona grandis* | 30 | 200 |
| 14 | ໄມ້ໂລ່ງເລ່ງ | *Fokienia hodginsii* | 35 | 200 |
| 15 | ໄມ້ໂລ່ງເລ່ງຕີນກັບແກ້ | *Cunninghamia konishii* | 35 | 200 |
| 16 | ໄມ້ໂລ່ງເລ່ງໃບທາງນົກຍູງ | *Cuaninghamia lanceoalata* | 35 | 200 |
| 17 | ໄມ້ເລ່ນເລ້ | *Calocedrus macrolepis* | 35 | 200 |
| 18 | ໄມ້ຮິ້ງຫອມ ຫຼື ໄມ້ຮິ້ງຊ່ຳ | *Glyptostrobus pensilis* | 30 | 200 |
| 19 | ໄມ້ຮິ້ງຂຽວ | *Dacrycarpus imbricatus* | 30 | 200 |
| 20 | ໄມ້ຮິ້ງນ້ຳ | *Dacrydium elatum* | 30 | 200 |
| 21 | ໄມ້ຮິ້ງເຫຼືອງ | *Keteleeria evelyniana* | 30 | 200 |
| 22 | ໄມ້ແປກສອງຍອຍ | *Pinus latteri* | 30 | 200 |
| 23 | ໄມ້ແປກສາມຍອຍ | *Pinus kesiya* | 30 | 200 |
| 24 | ໄມ້ແປກຫ້າຍອຍ | *Pinus dalatensis* | 30 | 200 |
| 25 | ໄມ້ແຄນຫີນ | *Hopea ferrea* | 30 | 200 |
| 26 | ໄມ້ແຄນເຮືອ | *Hopea odorata* | 30 | 200 |
| 27 | ໄມ້ແຄຫອມ ຫຼື ໄມ້ສະແຄ່ | *Cinnamomum cassia* | 30 | 200 |
| 28 | ໄມ້ມັນປາ | *Fagraea fragrans* | 30 | 200 |
| 29 | ໄມ້ຈຳປາປ່າ ຫຼື ຊິມຊວາຍ/ຣຳຊາຍ /ລວງຄອມ | *Magnolia bailloni* | 25 | 100 |
| 30 | ໄມ້ພຸດຜາ | *Gardenia cambodiana* | 20 | 100 |
| 31 | ໄມ້ນ້ຳກ້ຽງ | *Gluta spp.* | 25 | 200 |
| 32 | ໄມ້ສີໄຄຕົ້ນ | *Cinnamomum spp.* | 25 | 200 |
| 33 | ໄມ້ຈວງຫອມ | *Cinnamomum iners* | 25 | 100 |
| 34 | ໄມ້ຈຳປີປ່າ | *Magnolia champaca* | 25 | 200 |
| 35 | ໄມ້ຈັນຫອມ ຫຼື ຈັນປ່າ/ຈັນດົງ | *Mansonia gagei* | 20 | 100 |
| 36 | ໄມ້ເກັດລີ່ນ | *Rhus succedanea* | 30 | 200 |
| 37 | ໄມ້ໝາກເກືອ | *Diospyros mollis* | 20 | 200 |
| 38 | ໄມ້ລີ້ ຫຼື ໄມ້ແຫ | *Cynometra craibii* | 25 | 200 |
| 39 | ໄມ້ສາທອນ | *Millettia leucantha* | 30 | 200 |
| 40 | ໄມ້ເກດສະໜາ | *Aquilaria spp* | 20 | 100 |
| 41 | ໄມ້ແຄນຂະຍອມ | *Shorea roxburghil* | 25 | 200 |
| 42 | ໄມ້ແຄນຍ່ອງ | *Hopea spp.* | 25 | 200 |
| 43 | ໄມ້ຍົມຫີນ | *Chukrasia tabularis* | 25 | 200 |
| 44 | ໄມ້ຍາງແດງ | *Dipterocarpus costatus* | 35 | 200 |
| 45 | ໄມ້ຍາງຂາວ | *Dipterocarpus alatus* | 35 | 200 |
| 46 | ໄມ້ຍາງດົງ ຫຼື ຍາງເດັນ | *Dipterocarpus turbinatus* | 35 | 200 |
| 47 | ໄມ້ຊີຂາວ ຫຼື ໄມ້ຈີກດົງ | *Vatica odorata* | 25 | 200 |
| 48 | ໄມ້ຊີດົງ ຫຼື ໄມ້ຊີເປືອກບາງ | *Vatica harmandiana* | 25 | 200 |
| 49 | ໄມ້ຮັງ ຫຼື ໄມ້ເພົາ | *Shorea siamensis* | 20 | 200 |
| 50 | ໄມ້ຈິກ | *Shorea obtusa* | 25 | 200 |
| 51 | ໄມ້ເຊືອກ | *Terminalia tomentosa* | 25 | 200 |
| 52 | ໄມ້ຊາດ | *Dipterocarpus obtusifolium* | 25 | 200 |
| 53 | ໄມ້ເປືອຍເລືອດ | *Terminalia corticosa* | 25 | 200 |
| 54 | ໄມ້ເປືອຍ | *Lagerstroemia spp.* | 25 | 200 |
| 55 | ໄມ້ແຕ້ໜາມ ຫຼື ໄມ້ແຕ້ຣໍ | *Sindora siamensis* | 25 | 200 |
| 56 | ໄມ້ບາກ | *Anisoptera costata* | 35 | 200 |

| | | | | |
|---|---|---|---|---|
| 57 | ໄມ້ຍົມຫອມ | *Toona sureni, T.sinensis* | 25 | 200 |
| 58 | ໄມ້ຍົມຕຸ້ງ ຫຼື ເໜັນ | *Toona ciliata* | 25 | 200 |
| 59 | ໄມ້ຍົມຜາ | *Ailanthus triphysa* | 25 | 200 |
| 60 | ໄມ້ຂີ້ເຫຼັກບ້ານ | *Senna siamea* | 25 | 200 |
| 61 | ໄມ້ຂີ້ເຫຼັກດົງ | *Senna garrettiana* | 20 | 200 |
| 62 | ໄມ້ເຫຼັກ | *Mesua ferrea* | 25 | 200 |
| 63 | ໄມ້ມີ້ປ່າ | *Artocarpus rigidus* | 30 | 200 |
| 64 | ໄມ້ແດງນ້ຳ | *Pometia pinnata* | 30 | 200 |
| 65 | ໄມ້ກວາງແດງ | *Dysoxylum binectariferum* | 25 | 200 |
| 66 | ໄມ້ຫ່ານ້ຳ | *Syzygium spp.* | 25 | 200 |
| 67 | ໄມ້ສີງ ຫຼື ຢາງສີງ/ພະອີງ | *Calophyllum* spp. | 25 | 200 |
| 68 | ໄມ້ລຽງມັນ | *Berrya mollis, B. cordifolia* | 25 | 200 |
| 69 | ໄມ້ສະຄາຍ | *Betula alnoides* | 20 | 200 |
| 70 | ໄມ້ເຄັງ | *Dialium cochinchinensis* | 25 | 200 |
| 71 | ໄມ້ສະຄາມ ຫຼື ສະຝາງ | *Peltophorum dasyrachis* | 25 | 200 |
| 72 | ໄມ້ຂົນຕາຊ້າງ | *Dysoxylum loureiri* | 30 | 100 |
| 73 | ໄມ້ແຫນ | *Terminalia bellirica* | 25 | 200 |
| 74 | ໄມ້ສະແບງ | *Dipterocarpus intricatus* | 30 | 200 |
| 75 | ໄມ້ລະແອນ | *Hopea pierrei* | 30 | 200 |
| 76 | ໄມ້ໝາກຂາມແພບ | *Dialium indum* | 30 | 200 |
| 77 | ໄມ້ເຕັ່ນຫຼືໄມ້ລິງໄຫ້/ໄມ້ລີ້ | *Duabanga grandiflora* | 30 | 200 |
| 78 | ໄມ້ນົກກົກ | *Aglaia spectabilis* | 25 | 200 |
| 79 | ໄມ້ລຽງຝ້າຍ | *Eriolaena candollei* | 25 | 200 |
| 80 | ໄມ້ຮາວ ຫຼື ໝາກຫ້າປີກ (ເນື້ອໄມ້ເຫຼືອງ) | *Parashorea stellata* | 30 | 200 |
| 81 | ໄມ້ຮາວ ຫຼື ໝາກປີກດຽວ (ເນື້ອໄມ້ແດງ) | *Heritiera javanica* | 30 | 200 |
| 82 | ໄມ້ຂາວ | *Haldina cordifolia* | 30 | 200 |
| 83 | ໄມ້ຄີ້ງນີ້ງ ຫຼື ແຄນນີ້ງ/ຊີປ້ອງ | *Shorea thorelii* | 25 | 200 |
| 84 | ໄມ້ສາມສາ | *Samanea saman* | 30 | 200 |
| 85 | ໄມ້ແຄຟອຍ | *Stereospermum fimbriatum* | 25 | 200 |
| 86 | ໄມ້ໝາກຈອງບານ | *Scaphium macropodum* | 25 | 200 |
| 87 | ໄມ້ບົກ | *Irvingia malayana* | 25 | 200 |
| 88 | ໄມ້ຊໍ້ | *Gmelina arborea* | 25 | 200 |
| 89 | ໄມ້ບານແກ້ວ | *Unknown* | 25 | 200 |
| 90 | ໄມ້ສົ້ມຝາດ ຫຼື ຂົມຝາດ/ຟຸງຝາດ | *Bischofia javanica* | 30 | 200 |
| 91 | ໄມ້ກໍ່ແດງ | *Castanopsis hystrix* | 25 | 200 |
| 92 | ໄມ້ກໍ່ຫນາມ | *Castanopsis indica* | 25 | 200 |
| 93 | ໄມ້ກໍ່ແຄະ | *Quercus serrata* | 25 | 200 |
| 94 | ໄມ້ສີສຽດ | *Pentace burmanica* | 25 | 200 |
| 95 | ໄມ້ຕ້ອງ | *Sandoricum koetjape* | 25 | 200 |
| 96 | ໄມ້ມ່ວງປ່າ | *Mangifera spp.* | 30 | 200 |
| 97 | ໄມ້ຫວ້າດົງ | *Syzygium spp.* | 25 | 200 |
| 98 | ໄມ້ຫົວໂລ້ນ ຫຼື ສະຕໍ/ຄ້ອນກອງ | *Parkia sumatrana* | 25 | 200 |
| 99 | ໄມ້ໝາກແງວ | *Nephelium hypoleucum* | 20 | 200 |
| 100 | ໄມ້ຄາຍໂຊ້ ຫຼື ໄມ້ໝີ່/ຕະໂລ | *Schma wallichii* | 20 | 200 |
| 101 | ໄມ້ກະເດົາຊ້າງ ຫຼື ໄມ້ຫ່ຽນ | *Melia azedarach* | 20 | 200 |
| 102 | ໄມ້ກະໂດນໂຄກ | *Careya sphaerica* | 20 | 200 |
| 103 | ໄມ້ຖ່ອນ | *Albizia procera* | 25 | 200 |
| 104 | ໄມ້ຍານ | *Styrax tonkinensis* | 18 | 200 |
| 105 | ໄມ້ກຸງ | *Dipterocarpus tuberculatus* | 20 | 200 |
| 106 | ໄມ້ຮາມ | *Magnolia hypolampra* | 20 | 200 |

| | | | | |
|---|---|---|---|---|
| 107 | ໄມ້ສະຄ້ຳ | *Garuga pinnata* | 25 | 200 |
| 108 | ໄມ້ສົ້ມມຸ່ນ | *Eleaocarpus siamensis* | 25 | 200 |
| 109 | ໄມ້ພ່າວ | *Engelhardtia spp.* | 25 | 200 |
| 110 | ໄມ້ເລັ່ນ | *Albizia odoratissima* | 20 | 200 |
| 111 | ໄມ້ໝາກກໍ່ ຫຼື ພະເຈົ້າຫ້າອົງ | *Dracontomelon dao* | 30 | 200 |
| 112 | ໄມ້ໝາກເດື່ອ | *Ficus spp.* | 30 | 200 |
| 113 | ໄມ້ຢາງບົງ | *Palaquium annamensis* | 40 | 200 |
| 114 | ໄມ້ງິ້ວປ່າ (ດອກແດງ) | *Bombax ceiba* | 30 | 200 |
| 115 | ໄມ້ງິ້ວປ່າ (ດອກຂາວ) | *Bombax anceps* | 30 | 200 |
| 116 | ໄມ້ຕີນເປັດ (ປາຍໃບມົນ) | *Alstonia scholaris* | 25 | 200 |
| 117 | ໄມ້ຕີນເປັດ (ປາຍໃບແຫຼມ) | *Alstonia rostrata* | 25 | 200 |
| 118 | ໄມ້ໝາກແຕກ | *Prunus arborea* | 25 | 200 |
| 119 | ໄມ້ໝາກໃບ ຫຼື ໄມ້ເກື້ອມ/ເຫຼື້ອມ/ກັນ | *Canarium spp.* | 25 | 200 |
| 120 | ໄມ້ກ້ານເຫຼືອງ | *Nauclea orientalis* | 20 | 200 |
| 121 | ໄມ້ຮັງແຮນ | *Pterospermum lanceaefolium* | 25 | 200 |
| 122 | ໄມ້ບົ້ງນັ່ງ | *Carallia brachiata* | 25 | 200 |
| 123 | ໄມ້ກະແຊງ ຫຼື ໄມ້ກະຊັງ | *Cananga latifolia* | 25 | 200 |
| 124 | ໄມ້ທໍ່ມພາຍ ຫຼື ທໍ່ມນ້ຳ | *Mitragyna spp.* | 25 | 200 |
| 125 | ໄມ້ເບັນມອນ | *Anogeissus acuminata* | 25 | 200 |
| 126 | ໄມ້ຕີນນົກ ຫຼື ຂີ້ເຫງັນ | *Vitex spp.* | 25 | 200 |
| 127 | ໄມ້ຂີ້ໝູ | *Callerya atropurpurea/Or mosia cambodiana* | 20 | 200 |
| 128 | ໄມ້ສະອາມ | *Crypteronia paniculata* | 25 | 200 |
| 129 | ໄມ້ກາງຂອງ | *Millingtonia hortensis* | 20 | 200 |
| 130 | ໄມ້ສ້ານຫີນ ຫຼື ສ້ານແຄງ | *Dillenia parviflora* | 20 | 200 |
| 131 | ໄມ້ສົ້ມມໍ | *Terminalia citrina, T. chebula* | 20 | 200 |
| 132 | ໄມ້ສົ້ມໂຮງ | *Sterculia foetida* | 25 | 200 |
| 333 | ໄມ້ປໍ | *Sterculia spp.* | 25 | 200 |
| 134 | ໄມ້ໝາກກອກ | *Spondias pinnata* | 25 | 200 |
| 135 | ໄມ້ມູກນ້ອຍ | *Wrightia tomentosa* | 20 | 200 |
| 136 | ໄມ້ມູກໃຫຍ່ | *Wrightiaarborea* | 18 | 200 |
| 137 | ໄມ້ພູງ | *Tetrameles nudiflora* | 30 | 200 |
| 138 | ໄມ້ພອກ | *Parinari annamense* | 20 | 200 |
| 139 | ໄມ້ໝາກແຟນ | *Protium serratum* | 25 | 200 |
| 140 | ໄມ້ຕາເສືອ | *Aphanamixis polystachya* | 25 | 200 |
| 141 | ໄມ້ລຳໃຍປ່າ | *Dimocarpus spp.* | 20 | 200 |
| 142 | ໄມ້ກະເດົາຂົມ | *Azadirachta indica* | 20 | 200 |
| 143 | ໄມ້ຕິ້ວເຫຼືອງ | *Cratoxylum cochinchinensis* | 18 | 200 |
| 144 | ໄມ້ຕິ້ວສົ້ມ | *Cratoxylumformosum* | 18 | 200 |
| 145 | ໄມ້ຕິ້ວໜາມ | *Cratoxylum maingayi* | 18 | 200 |
| 146 | ໄມ້ໄຂ່ເນົ່າ | *Gardenia sootepensis* | 18 | 200 |
| 147 | ໄມ້ກົ້ວກ | *Garcinia ferrea* | 20 | 200 |
| 148 | ໄມ້ຜ່ອງ | *Garcinia multiflora* | 25 | 200 |
| 149 | ໄມ້ແກ | *Combretum quadrangulare* | 18 | 200 |
| 150 | ໄມ້ຫຳອາວ | *Pterospermum megalocarpum* | 20 | 200 |
| 151 | ໄມ້ໄຮ | *Ficus spp* | 30 | 200 |
| 152 | ໄມ້ຊໍ້ເໜັນ | *Gmelina arborea* | 25 | 200 |
| 153 | ໄມ້ໝາກຄອມ | *Microcos tomentosae* | 18 | 200 |
| 154 | ໄມ້ສະໂກ | *Breonia chinensis* | 20 | 200 |
| 155 | ໄມ້ຄໍ້ສົ້ມ | *Schleichera oleosa* | 20 | 200 |
| 156 | ໄມ້ພິມານ | *Acacia harmandiana* | 20 | 200 |
| 157 | ໄມ້ນິມຍານ | *Barringtonia spp.* | 25 | 200 |

| | | | | |
|---|---|---|---|---|
| 158 | ໄມ້ສົ້ມຮໍ່ | *Allospondias lakonensis* | 20 | 200 |
| 159 | ໄມ້ໝາກມີ | *Choeropondias axillaris* | 18 | 200 |
| 160 | ໄມ້ຕຸມກາ | *Strychnos nux-vomina* | 18 | 200 |
| 161 | ໄມ້ເບັນຝ້າຍ | *Liquidambar formosana* | 25 | 200 |
| 162 | ໄມ້ກະແສ ຫຼືໄມ້ຜັກຊີ | *Albizia lebbeck* | 20 | 200 |
| 163 | ໄມ້ພະຄາງ | *Albizia chinensis* | 20 | 200 |
| 164 | ໄມ້ຊ້າຝ້າຍ | *Unknown* | 18 | 200 |
| 165 | ໄມ້ສະເມັກ | *Unknown* | 18 | 200 |
| 166 | ໄມ້ສີດາດົງ | *Unknown* | 20 | 200 |
| 167 | ໄມ້ກະທ້າງ | *Unknown* | 20 | 200 |

ໄມ້ທ່ອນ ທີ່ບໍ່ມີຊື່ຕາມທີ່ກຳນົດໄວ້ໃນມາດຕານີ້ ແມ່ນໃຫ້ຈັດຊັ້ນຄຸນນະພາບເອົາໜ້າຕ້າງແຕ່ ຊາວ ຊັງຕີແມັດ ແລະ ລວງຍາວແຕ່ ສອງຮ້ອຍ ຊັງຕີແມັດ ຂຶ້ນໄປ. ສ່ວນໄມ້ທີ່ມີໜ້າຕ້າງ ແລະ ລວງຍາວນ້ອຍກ່ວາຂະໜາດທີ່ໄດ້ກຳນົດໄວ້ໃນຕາຕະລາງຂ້າງເທິງນັ້ນ ໃຫ້ນຳໃຊ້ວິທີການຊັ່ງນ້ຳໜັກ ໂດຍຖືເອົາຫົວໜ່ວຍເປັນ ກິໂລກຣາມ ຫຼື ໂຕນ.

## ມາດຕາ 7 ການວັດແທກໜ້າຕ້າງ

ການວັດແທກໜ້າຕ້າງໄມ້ທ່ອນທຸກຄັ້ງ ແມ່ນໃຫ້ແທກສອງສົ້ນ ແລະ ແຕ່ລະສົ້ນໃຫ້ແທກສອງຈຸດ ໂດຍຜ່ານຈຸດໃຈກາງຂອງໜ້າໄມ້ ພ້ອມທັງໝາຍຈຸດວັດແທກແຕ່ລະຈຸດໃຫ້ຈະແຈ້ງ ໂດຍໃຊ້ຫົວໜ່ວຍວັດແທກເປັນ ຊັງຕີແມັດ ແລ້ວມາສະເລ່ຍ. ການວັດແທກໜ້າຕ້າງໄມ້ທ່ອນດິບ ແມ່ນໃຫ້ແທກເອົາທັງເປືອກ. ສຳລັບໄມ້ຕາຍ ແມ່ນບໍ່ໃຫ້ແທກເອົາເປືອກທີ່ໂດກເນົ່າ ຕາມຮູບແບບ ແລະ ສູດຄິດໄລ່ ດັ່ງນີ້:

- ຮູບແບບວັດແທກໜ້າຕ້າງໄມ້ທ່ອນ:




- ສູດຄິດໄລ່:

$$D_1 = \frac{d_1 + d_2}{2}; D_2 = \frac{d_3 + d_4}{2} \Rightarrow \bar{D} = \frac{D_1 + D_2}{2}$$

ກໍລະນີໄມ້ທ່ອນມີພຶງ ແມ່ນໃຫ້ວັດແທກຫຼາຍຄັ້ງຕາມຈຳນວນພຶງຂອງທັງສອງສົ້ນ ໂດຍໃຫ້ຜ່ານຈຸດໃຈກາງຂອງໜ້າຕ້າງໄມ້ ແລ້ວເອົາມາສະເລ່ຍ ຕາມຮູບແບບ ແລະ ສູດຄິດໄລ່ ດັ່ງນີ້:

- ຮູບແບບການວັດແທກໄມ້ທ່ອນມີພຶງ:



– ສູດຄິດໄລ່:

$$D_1 = \frac{d_{1.1} + d_{1.2} + d_{1.3} + \cdots d_{1.n}}{N}$$

$$D_2 = \frac{d_{2.1} + d_{2.2} + \cdots d_{2.n}}{N}$$

$$D = \frac{D_1 + D_2}{2}$$

$d_1$ = ໜ້າຕ້າງສະເລ່ຍສົ້ນກົກ

$d_2$ = ໜ້າຕ້າງສະເລ່ຍສົ້ນປາຍ

$D$ = ໜ້າຕ້າງໄມ້ທ່ອນ

$N$ $(n)$ = ຈຳນວນ ເທື່ອແທກ

$d_{...}$ = ຄ່າວັດແທກໜ້າຕ້າງແຕ່ລະເທື່ອ

ກໍລະນີທີ່ບໍ່ສາມາດວັດແທກໜ້າຕ້າງໄດ້ ແມ່ນອະນຸຍາດໃຫ້ແທກລວງຮອບ (c) ຢູ່ຈຸດກາງທ່ອນໄມ້.

## ມາດຕາ 8 ການວັດແທກລວງຍາວ

ການວັດແທກລວງຍາວຂອງໄມ້ທ່ອນ ໃຫ້ຖືເອົາຫົວໜ່ວຍເປັນ ຊັງຕີແມັດ, ຕ້ອງດຶງໄມ້ແມັດໃຫ້ເຄັ່ງ ແຕ່ສົ້ນກົກຫາສົ້ນປາຍຂອງໄມ້ທ່ອນ.

ສຳລັບໄມ້ທ່ອນນອນໃນບັນຊີ I ໃຫ້ລົບອອກບໍ່ເກີນ ຫ້າ ຊັງຕີແມັດ, ສ່ວນໄມ້ບັນຊີ II ແລະ ບັນຊີ III ບໍ່ໃຫ້ເກີນ ສິບ ຊັງຕີແມັດ ເຊັ່ນ: ການບັນທຶກລວງຍາວ ຂອງໄມ້ບັນຊີ I ທີ່ມີລວງຍາວ ສາມຮ້ອຍຫ້າ ຊັງຕີແມັດ ໃຫ້ບັນທຶກເອົາ ສາມຮ້ອຍ ຊັງຕີແມັດ ແລະ ການບັນທຶກລວງຍາວຂອງໄມ້ ບັນຊີ II ແລະ III ທີ່ມີລວງຍາວ ສີ່ຮ້ອຍສິບ ຊັງຕີແມັດ ໃຫ້ບັນທຶກເອົາ ສີ່ຮ້ອຍ ຊັງຕີແມັດ.

ການວັດແທກລວງຍາວຂອງໄມ້ຄິດ ແມ່ນ ໃຫ້ດຶງໄມ້ແມັດ ແຕ່ສົ້ນກົກຫາສົ້ນປາຍຂອງໄມ້ທ່ອນ. ໃນກໍລະນີໄມ້ທ່ອນຕັດສົ້ນບໍ່ພຽງ ຫຼື ເຈັ້ຍ ແມ່ນໃຫ້ແທກເອົາບ່ອນສັ້ນສຸດ ດັ່ງຮູບ ລຸ່ມນີ້:

1. ການວັດແທກໄມ້ທ່ອນຕັດ ສອງສົ້ນບໍ່ພຽງ:




2. ການວັດແທກໄມ້ທ່ອນຕັດໜຶ່ງສົ້ນບໍ່ພຽງ:



**ມາດຕາ 9 ການຄິດໄລ່ບໍລິມາດໄມ້ທ່ອນ**

ການຄິດໄລ່ບໍລິມາດໄມ້ທ່ອນ ໃຫ້ຖືເອົາຫົວໜ່ວຍເປັນ ແມັດກ້ອນ ($ມ^3$) ແລະ ເລກເສດຫຼັງຈຸດ ສາມ ໂຕ ຕາມສູດຄິດໄລ່ ດັ່ງນີ້:

– ກໍລະນີວັດແທກໜ້າຕ້າງ ໃຫ້ໃຊ້ສູດຄິດໄລ່ທີ 1

$$V = D^2 \times \frac{\pi}{4} \times L$$

$V$ = ບໍລິມາດໄມ້

$L$ = ລວງຍາວໄມ້ທ່ອນ

$D$ = ໜ້າຕ້າງ

$\frac{\pi}{4}$ = 0,7854

$\pi$ = 3,14

– ກໍລະນີວັດແທກລວງຮອບ ໃຫ້ໃຊ້ສູດຄິດໄລ່ທີ 2

$$V = C^2 \times \frac{1}{4\pi} \times L$$

$V$ = ບໍລິມາດໄມ້

$L$ = ລວງຍາວໄມ້ທ່ອນ

$\frac{1}{4\pi}$ = 0,0796

$C$ = ລວງຮອບ

**ມາດຕາ 10 ການວັດແທກ ແລະ ການຄິດໄລ່ບໍລິມາດ ໂກນ ຫຼື ໃຈເນົ່າ**

ໄມ້ທ່ອນມີໂກນ ຫຼື ໃຈເນົ່າ ການວັດແທກລວງຍາວຂອງໂກນ ຕ້ອງໃຊ້ເຫຼັກ ຫຼື ໄມ້ແທງເຂົ້າຕາມຮູຂອງໂກນຈົນສຸດແລ້ວດຶງເຫຼັກ ຫຼື ໄມ້ອອກມາ ຈຶ່ງໃຊ້ແມັດແທກ ຕາມລວງຍາວຂອງເຫຼັກ ຫຼື ໄມ້ ນັ້ນ. ສຳລັບຄວາມກວ້າງຂອງໂກນແມ່ນໃຫ້ແທກເອົາໜ້າຕັດຂອງໂກນໄມ້ ທີ່ໂດກເນົ່າ ແລະ ໃຫ້ແທກສອງຈຸດ ຜ່ານຈຸດໃຈກາງຂອງໂກນ ໂດຍໃຊ້ຫົວໜ່ວຍວັດແທກເປັນ ຊັງຕີແມັດ ດັ່ງນີ້:

1. ໄມ້ທ່ອນໂກນ ຫຼື ໃຈເນົ່າ:




2. ກໍລະນີ ໂກນຊອດ ໃຫ້ກຳນົດລວງຍາວເທົ່າກັບລວງຍາວຂອງໄມ້ທ່ອນນັ້ນເລີຍ.



## ມາດຕາ 11 ການຄິດໄລ່ບໍລິມາດໄມ້ທ່ອນໂກນ ຫຼື ໃຈເນົ່າ

ການຄິດໄລ່ບໍລິມາດໄມ້ທ່ອນໂກນ ຫຼື ໃຈເນົ່າ ແມ່ນໃຫ້ເອົາບໍລິມາດທັງໝົດຂອງໄມ້ທ່ອນ ລົບໃຫ້ບໍລິມາດຂອງໂກນ ໂດຍນຳໃຊ້ສູດ ດັ່ງນີ້:

$$V_p = d_p{}^2 \times l \times \frac{\pi}{4}$$

$Vp$ = ບໍລິມາດຂອງໂກນ

$l$ = ລວງຍາວຂອງໂກນ ຫຼື ໃຈເນົ່າ

$d_p$ = ໜ້າຕ້າງຂອງໂກນ ຫຼື ໃຈເນົ່າ

## ມາດຕາ 12 ການວັດແທກ ແລະ ເກັບກຳຕຳໜິຂອງໄມ້ທ່ອນ

ການວັດແທກ ແລະ ເກັບກຳຕຳໜິໄມ້ທ່ອນ ແມ່ນເພື່ອເປັນບ່ອນອີງໃຫ້ແກ່ ການຈັດຊັ້ນຄຸນນະພາບໄມ້ທ່ອນ ໂດຍອີງໃສ່ ຮ່ອງ, ພົງ, ໂກນ ຫຼື ໃຈເນົ່າ ແລະ ແຕກວິງປີກ ຫຼື ລັດສະໝີ ຂອງໄມ້ທ່ອນ ດັ່ງນີ້:

1. ຄວາມຄົດ: ເກີດຂຶ້ນຈາກຄວາມກົດດັນຈາກໃນຕົວ ແລະ ນອກຕົວ ເວລາຕົ້ນໄມ້ເຕີບໃຫຍ່ຂະຫຍາຍຕົວ ເຮັດໃຫ້ຕົ້ນໄມ້ມີລັກສະນະຄົດໂງ. ການວັດແທກ: ດຶງແມັດກວມຄົດທາງລວງຍາວຂອງໄມ້ທ່ອນ ແລ້ວແທກເອົາຄວາມເລິກຂອງຄົດບ່ອນເລິກກວ່າໝູ່ ຖ້າມີຫຼາຍຄົດໃນໄມ້ທ່ອນດຽວກັນ ໃຫ້ແທກຄວາມເລິກຂອງແຕ່ລະຄົດແລ້ວສະເລ່ຍ. ໃນກໍລະນີທີ່ໄມ້ທ່ອນຫາກຄົດເລິກເກີນ ໜຶ່ງສ່ວນສອງ ຂອງໜ້າຕ້າງ ຕ້ອງບັ້ນທ່ອນເພື່ອຍົກຊັ້ນຄຸນນະພາບໄມ້ທ່ອນໃຫ້ສູງຂຶ້ນ. ຕາມຮູບພາບ ແລະ ສູດຄິດໄລ່ ດັ່ງນີ້:
   - ຮູບພາບວັດແທກ:




   - ສູດຄິດໄລ່:

$$d = \frac{d_1 + d_2 + \ldots\ldots d_n}{N}$$

$d$ = ຄວາມເລິກສະເລ່ຍ

$N$ = ຈຳນວນຂອງຄົດ

$d1$ = ຄວາມເລິກແຕ່ລະຄົດ

ການບັນທຶກ: ແມ່ນບັນທຶກຄວາມເລິກຂອງຄົດ ແລະ ຈຳນວນຄົດ.

2. ພົງ: ແມ່ນເນື້ອໄມ້ງອກເປັນແຜ່ນອອກຕາມລຳຕົ້ນລັກສະນະຄືປີກ. ການວັດແທກ ແມ່ນໃຫ້ເອົາຄວາມເລິກຂອງຮ່ອງພົງໄມ້ທ່ອນ ຢູ່ສົ້ນໄມ້, ຖ້າມີຫຼາຍພົງ ໃຫ້ວັດແທກເອົາຄວາມເລິກຂອງແຕ່ລະພົງ ແລ້ວມາສະເລ່ຍ ຕາມຮູບພາບ ແລະ ສູດຄິດໄລ່ ດັ່ງນີ້:
   - ຮູບພາບວັດແທກ ແລະ ເກັບກຳຕຳໜິພົງ:



– ສູດຄິດໄລ່:

$$D = \frac{d_1 + d_2 + d_3 + ......d_n}{N}$$

$D =$ ຄວາມເລິກສະເລ່ຍຂອງພົງ

$N =$ ຈຳນວນພົງ

$d_{1-n} =$ ຄວາມເລິກຂອງແຕ່ລະພົງ

3. **ຮ່ອງ:** ແມ່ນສ່ວນເລິກເຂົ້າໄປຕາມລວງຍາວຂອງລຳທ່ອນ ຍ້ອນສາເຫດຂອງທຳມະຊາດ ຫຼື ສິ່ງທີ່ມີຊີວິດສ້າງຂຶ້ນ. ການວັດແທກ ແມ່ນໃຫ້ເອົາຄວາມເລິກຂອງຮ່ອງ, ຖ້າມີຫຼາຍຮ່ອງ ໃຫ້ແທກເອົາຄວາມເລິກຂອງແຕ່ລະຮ່ອງແລ້ວມາສະເລ່ຍ ຕາມຮູບແບບ ແລະ ສູດຄິດໄລ່ ດັ່ງນີ້:
   – ຮູບພາບການວັດແທກ ແລະ ເກັບກຳຕຳໜິຮ່ອງ:




– ສູດຄິດໄລ່:

$$D = \frac{d_1 + d_2 + d_3 + d_4 + .........d_n}{N}$$

$D =$ ຄວາມເລິກສະເລ່ຍຂອງຮ່ອງ

$N =$ ຈຳນວນຮ່ອງ

$d_{1-n} =$ ຄວາມເລິກຂອງແຕ່ລະຮ່ອງ

4. **ໄມ້ທ່ອນໂກນ ຫຼື ໃຈເນົ່າ**: ແມ່ນເນື້ອໄມ້ທີ່ໂດກເນົ່າແລ້ວຊຸອອກ ເຮັດໃຫ້ເກີດມີຮູຍາວໄປຕາມທ່ອນໄມ້. ວິທີການວັດແທກ: ໃຫ້ແທກເອົາຄວາມກ້ວາງຂອງໂກນ ຫຼື ໃຈເນົ່າ, ຖ້າຫາກມີເນື້ອໄມ້ເນົ່າອ້ອມໂກນ ກໍໃຫ້ແທກເອົາເນື້ອໄມ້ເນົ່ານັ້ນ ເຂົ້າເປັນຄວາມກວ້າງຂອງໂກນ ຕາມຮູບພາບ ແລະ ສູດຄິດໄລ່ ດັ່ງນີ້:
   – ຮູບພາບການວັດແທກ ແລະ ເກັບກຳຕຳໜິໄມ້ທ່ອນໂກນ ຫຼື ໃຈເນົ່າ:

ທ່ອນໄມ້ມີຕຳໜິ ໂກນ ຫຼື ໃຈເນົ່າ




– ສຳລັບສູດຄິດໄລ່ ໄມ້ທ່ອນໂກນ ຫຼື ໃຈເນົ່າ ແມ່ນປະຕິບັດຄືກັນກັບມາດຕາ 11 ຂອງຂໍ້ຕົກລົງສະບັບນີ້.

5. **ແຕກວົງປີກ ຫຼື ແຕກລັດສະໝີ:** ແມ່ນຮອຍແຕກອ້ອມໃຈໄມ້ ແລະ ຮອຍແຕກຕັດຢູ່ຕາມໜ້າໄມ້ທ່ອນ. ການວັດແທກ ໃຫ້ແທກເອົາຄວາມເລິກຂອງຮອຍແຕກ ທີ່ເລິກກວ່າໝູ່ຂອງທັງສອງສົ້ນ (ຖ້າມີ) ແລ້ວບວກເຂົ້າກັນ ກໍ່ຈະໄດ້ຄວາມເລິກ ຂອງແຕກວົງປີກ ຫຼື ລັດສະໝີ ຂອງໄມ້ທ່ອນນັ້ນ ຕາມຮູບພາບ ແລະ ສູດຄິດໄລ່ ດັ່ງນີ້:

– ຮູບການວັດແທກ ແລະ ເກັບກຳຕຳໜິແຕກວົງປີກ ຫຼື ແຕກລັດສະໝີ:




– ສູດຄິດໄລ່:

$$l = \frac{l_1 + l_2}{N}$$

$l=$ ຄວາມເລິກຂອງແຕກວົງປີກ ຫຼື ລັດສະໝີ

$N=$ ຈຳນວນຮອຍແຕກ

**ມາດຕາ 13 ການກຳນົດຕຳໜິປະເພດຕ່າງໆເພື່ອການຈັດຊັ້ນຄຸນນະພາບໄມ້ທ່ອນ**

ພາຍຫຼັງໄດ້ຂໍ້ມູນການວັດແທກ ແລະ ເກັບກຳຕຳໜິຂອງໄມ້ທ່ອນ ຕາມທີ່ໄດ້ກຳນົດໄວ້ໃນ ມາດຕາ 12 ຂອງຂໍ້ຕົກລົງສະບັບນີ້ ແລ້ວ ໃຫ້ບັນທຶກຂໍ້ມູນທັງໝົດເທົ່າໃນຕາຕະລາງຈັດຊັ້ນຄຸນນະພາບໄມ້ທ່ອນ ດັ່ງນີ້:

| ລ/ດ | ປະເພດຕຳໜິ | ຊັ້ນຄຸນນະພາບໄມ້ທ່ອນ | | |
|---|---|---|---|---|
| | | **ກ** | **ຂ** | **ຄ** |
| 1 | ຄົດ | $d \le \frac{1}{10} D; n = 1-2$ | $d \le \frac{1}{10} D; n = 3-4$<br>$d > \frac{1}{10} \le \frac{1}{5} D; n \le 2$<br>$d > \frac{1}{5} \le \frac{1}{2} D; n = 1$ | $d \le \frac{1}{10} D; n > 4$<br>$d > \frac{1}{5} \le \frac{1}{2} D; n = 2-3$ |
| 2 | ພົງ | $d \le \frac{1}{10} D; n = 1-2$ | $d \le \frac{1}{10} D; n = 3-4$<br>$d > \frac{1}{10} \le \frac{1}{5} D; n \le 2$<br>$d > \frac{1}{5} \le \frac{1}{2} D; n = 1$ | $d \le \frac{1}{10} D; n > 4$<br>$d > \frac{1}{5} \le \frac{1}{2} D; n = 2-3$ |
| 3 | ຮ່ອງ | $d \le \frac{1}{10} D; n = 1-2$ | $d \le \frac{1}{10} D; n = 3-4$<br>$d > \frac{1}{10} \le \frac{1}{5} D; n \le 2$<br>$d > \frac{1}{5} \le \frac{1}{2} D; n = 1$ | $d \le \frac{1}{10} D; n > 4$<br>$d > \frac{1}{5} \le \frac{1}{2} D; n = 2-3$ |
| 4 | ໂກນ ຫຼື ໃຈເປົ່າ | $d \le \frac{1}{10} D$ | $d > \frac{1}{10} \le \frac{1}{5} D$ | $d > \frac{1}{5} \le \frac{1}{3} D$ |

| | | | | |
|---|---|---|---|---|
| 5 | ແຕກວົງປີກ ຫຼື ລັດສະໝີ | $l \leq \frac{1}{10}L; n=1-2$ | $l \leq \frac{1}{10}L; n=3-4$<br>$l > \frac{1}{10} \leq \frac{1}{5}L; n \leq 2$<br>$l > \frac{1}{5} \leq \frac{1}{2}L; n=1$ | $l \leq \frac{1}{5}L; n>3$<br>$l > \frac{1}{5} \leq \frac{1}{2}L; n=2-3$ |

$D$ = ໜ້າຕ້າງໄມ້ທ່ອນ;

$L$ = ຄວາມຍາວຂອງໄມ້ທ່ອນ;

$n$ = ຈຳນວນຕຳໜິ;

$d$ = ຄວາມກວ້າງ ຫຼື ຄວາມເລິກຂອງຕຳໜິ;

$l$ = ຄວາມຍາວຂອງຕຳໜິ.

ໃນກໍລະນີຕຳໜິບໍ່ມີຢູ່ໃນປະເພດ ກ, ຂ ແລະ ຄ ແມ່ນໃຫ້ຈັດໄມ້ທ່ອນນັ້ນ ເປັນນອກປະເພດ ແລະ ຖ້າໄມ້ທ່ອນບໍ່ມີຕຳໜິຫຍັງ ແມ່ນຈັດຢູ່ໃນປະເພດ ກ.

**ມາດຕາ 14 ການຈັດຊັ້ນຄຸນນະພາບໄມ້ທ່ອນ**

ການຈັດຊັ້ນຄຸນນະພາບໄມ້ທ່ອນ ແມ່ນອີງໃສ່ການບັນທຶກບັນດາຕຳໜິໄມ້ທ່ອນ ຊຶ່ງມີຈຳນວນ ແລະ ປະເພດຕຳໜິແຕກຕ່າງກັນຕາມແບບພິມວັດແທກ ແລະ ຈັດຊັ້ນຄຸນນະພາບໄມ້ທ່ອນ ໂດຍຄິດໄລ່ຄ່າສະເລ່ຍ ຂອງບັນດາຕຳໜິ ມາສົມທຽບໃສ່ຄ່າທີ່ໄດ້ກຳນົດໄວ້ໃນຕາຕະລາງຈັດຊັ້ນຄຸນນະພາບໄມ້ທ່ອນ ເພື່ອເປັນບ່ອນ ອີງໃຫ້ແກ່ການຈັດແບ່ງປະເພດໄມ້ທ່ອນ ຕາມແຕ່ລະກໍລະນີ.

ສຳລັບແບບພິມ ການວັດແທກ ແລະ ຈັດຊັ້ນຄຸນນະພາບໄມ້ທ່ອນ ໄດ້ກຳນົດໄວ້ໃນເອກະສານຊ້ອນ ທ້າຍ 1.

## ໝວດທີ 3
## ການວັດແທກ ແລະ ຄິດໄລ່ບໍລິມາດ ຕໍໄມ້, ປູດໄມ້ ແລະ ໄມ້ເປັນພະລັງງານ

**ມາດຕາ 15 ການກຳນົດຂະໜາດຂອງຕໍໄມ້**

ຂະໜາດຂອງຕໍໄມ້ ແມ່ນໃຫ້ນັບແຕ່ລວງສູງຂອງຕໍໄມ້ (H) ສູງສຸດບໍ່ໃຫ້ເກີນ ໜຶ່ງຮ້ອຍສາມສິບ ຊັງຕີແມັດ (ໜຶ່ງແມັດສາມສິບ) ຖ້າຫາກເກີນນັ້ນໄປ ໃຫ້ຖືວ່າເປັນໄມ້ທ່ອນ ແລະ ໃຫ້ຄິດໄລ່ ພັນທະຕ່າງໆ ຄືກັນ ກັບໄມ້ທ່ອນ ດັ່ງນີ້:



**ມາດຕາ 16 ການວັດແທກ ແລະ ການຄິດໄລ່ບໍລິມາດ ຕໍໄມ້**

ການວັດແທກວັດຮອບຂອງຕໍໄມ້ ແມ່ນໃຫ້ແທກເອົາຢູ່ ສອງຈຸດ ແບ່ງຮາກສູງສຸດ ແລະ ຈຸດສູງສຸດຂອງຕໍໄມ້ ແລ້ວມາສະເລ່ຍ ເປັນວັດຮອບຕົວຈິງຂອງຕໍໄມ້ ດັ່ງນີ້:




ການວັດແທກລວງຍາວຂອງຕໍໄມ້ *(L)* ໃຫ້ແທກແຕ່ຈຸດເທິງສຸດ ຫາ ຈຸດປາຍສຸດ ຫຼື ຮາກທີ່ຍາວສຸດຂອງຕໍໄມ້ ຕາມຮູບພາບ ແລະ ສູດຄິດໄລ່ ດັ່ງນີ້:

– ຮູບພາບການວັດແທກລວງຍາວຂອງຕໍໄມ້:




– ສູດຄິດໄລ່ບໍລິມາດ:

$$V = D^2 \times L \times \frac{\pi}{4}$$

$V$ = ບໍລິມາດ (ແມັດກ້ອນ)
$L$ = ລວງຍາວ (ແມັດ)
$\pi$ = 3,14

$$D = \frac{C}{\pi}$$ (ຊັງຕີແມັດ)

ການຄິດໄລ່ບໍລິມາດຂອງຕໍໄມ້ ແມ່ນຄິດໄລ່ຄືກັນກັບໄມ້ທ່ອນ ຫຼື ແບບຮູບທໍ່ກົມ. ສ່ວນຮາກຂອງຕໍໄມ້ເຮົາບໍ່ສາມາດແທກ ແລະ ຄິດໄລ່ໄດ້ໝົດ.

ການຄິດໄລ່ຄ່າພັນທະຕໍໄມ້ ແລະ ປູດໄມ້ ເຂົ້າງົບປະມານຂອງລັດ ໃຫ້ເອົາຕົວເລກນໍ້າໜັກເປັນຫຼັກ ໂດຍການຕິດຊັ່ງນໍ້າໜັກຕົວຈິງ.

### ມາດຕາ 17 ການວັດແທກ ແລະ ຄິດໄລ່ບໍລິມາດ ປູດໄມ້

ການວັດແທກປູດໄມ້ ໃຫ້ແທກລວງສູງ, ລວງກ້ວາງ ແລະ ລວງຍາວ ຂອງປູດໄມ້ ໂດຍໃຊ້ຫົວໜ່ວຍວັດແທກເປັນ ຊັງຕີແມັດ ຕາມຮູບພາບ ແລະ ສູດຄິດໄລ່ ດັ່ງນີ້:

- ຮູບພາບການວັດແທກປູດໄມ້:




- ສູດຄິດໄລ່:

$$V = (\chi)^2 \times H \times \frac{\pi}{2} \quad \chi = \frac{L+l}{4};$$

$$\chi = \frac{L+l}{4}$$

$V$ = ບໍລິມາດ (ມ$^3$)
$\chi$ = ເນື້ອທີ່ໜ້າຕັດປູດໄມ້
$H$ = ລວງສູງ (ຊມ)
$L$ = ລວງຍາວ (ຊມ)
l = ລວງກ້ວາງ (ຊມ)
$\frac{\pi}{2}$ = 1,57 ຄ່າຄົງທີ່

<u>ຕົວຢ່າງ</u> L = 150 ຊມ; l = 60 ຊມ $\chi = \frac{150+60}{4}$

ປູດໄມ້ທີ່ບໍ່ສາມາດວັດແທກໄດ້ ແມ່ນໃຫ້ຊັ່ງນ້ຳໜັກ ໂດຍຖືເອົາຫົວໜ່ວຍເປັນ ກິໂລກຣາມ ຫຼື ໂຕນ.

### ມາດຕາ 18 ການວັດແທກ ແລະ ຄິດໄລ່ໄມ້ເປັນພະລັງງານ

ການວັດແທກໄມ້ເປັນພະລັງງານ ແມ່ນໂດຍຖືເອົາກອງໄມ້ຟືນ ແລະ ໄມ້ເຜົາຖ່ານ ເທົ່າກັບລວງກວ້າງ ໜຶ່ງ ແມັດ ຄູນລວງສູງ ໜຶ່ງ ແມັດ ຄູນລວງຍາວ ໜຶ່ງ ແມັດ ໃຫ້ເອົາຫົວໜ່ວຍເປັນແມັດກ້ອນ (ມ$^3$)



## ໝວດທີ 4
## ບົດບັນຍັດສຸດທ້າຍ

**ມາດຕາ 19 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມປ່າໄມ້ ເປັນໃຈກາງປະສານສົມທົບ ກັບພາກສ່ວນກ່ຽວຂ້ອງ ທັງຂັ້ນສູນກາງ ແລະ ທ້ອງຖິ່ນ ໂຄສະນາເຜີຍແຜ່ ແລະ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 20 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ແລະ ພາຍຫຼັງລົງຈົດໝາຍເຫດທາງລັດຖະການ ສິບຫ້າ ວັນ.

ຂໍ້ຕົກລົງ ສະບັບນີ້ ໃຊ້ປ່ຽນແທນ ຂໍ້ຕົກລົງຂອງລັດຖະມົນຕີ ສະບັບເລກທີ 0116/ກປ, ລົງວັນທີ 17 ພຶດສະພາ 2007 ວ່າດ້ວຍລະບຽບການວັດແທກ ໄມ້ທ່ອນ, ຕໍໄມ້, ປຸດໄມ້ ແລະ ການຈັດຊັ້ນຄຸນະພາບໄມ້ທ່ອນ.

**ລັດຖະມົນຕີ**

ກະຊວງກະສິກຳ ແລະ ປ່າໄມ້ — ລັດຖະມົນຕີ (stamp)

ປອ. ເພັດ ພົມພິພັກ

ເອກະສານຊ້ອນທ້າຍ 1

# ແບບພິມການວັດແທກ ແລະ ຈັດຊັ້ນຄຸນນະພາບໄມ້ທ່ອນ

ເລກທີ............/ປມຂ

ລົງວັນທີ.........................

ຊື່ໜ່ວຍຂຸດຄົ້ນ...............ເຂດຂຸດຄົ້ນ............

ຊື່ສະໜາມໄມ້.................; ບ້ານ..................... ເມືອງ.............................ແຂວງ...........

ວັນທີວັດແທກ:..........................ໃບທີ.......................

| ລ/ດ | ເບີທ່ອນ | ຊະນິດໄມ້ | ໜ້າຕ້າງ (ຊມ) | ລວງຍາວ (ຊມ) | ບໍລິມາດ (ມ3) | ຄີດ | | | | ພົງ | | | | ຮ່ອງ | | | ໂກນ ຫຼື ໃຈເນົ່າ | | | ແຕກອົ່ງປີ/ລັດສະໝີ | | | | ປະເພດ |
|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|---|
| | | | | | | d | d/D | ຈນ | ປພ | d | d/D | ຈນ | ປພ | d | d/D | ຈນ | d | d/D | ປພ | l | l/L | ຈນ | ປພ | |
| | | | | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | | | | |
| | | | | | | | | | | | | | | | | | | | | | | | | |

**ໝາຍເຫດ:** ກໍລະນີ ຫ້າ ຕຳນິທີ່ກ່າວຂ້າງເທິງນັ້ນ ຫາກບໍ່ມີຢູ່ໄມ້ທ່ອນໃຫ້ບັນທຶກ "ກ" ໃສ່ຫ້ອງ "ປພ" ຂອງແຕ່ລະຕຳນິ ເພື່ອໃຫ້ແຕ່ລະຫ້ອງມີການຈັດປະເພດ.

**ຢັ້ງຢືນ**

**ຫົວໜ້າຂະແໜງປ່າໄມ້ແຂວງ** | **ວິຊາການກວດກາ** | **ຜູ້ຈັດຊັ້ນຄຸນນະພາບ** | **ຜູ້ວັດແທກ**

**ການຈັດແບ່ງປະເພດໄມ້ທ່ອນຕາມຕຳນິ:**

1. ປະເພດ
   - ກ ມີ 5
   - ຂ ມີ 0
   - ຄ ມີ 0

   ໃຫ້ຈັດເປັນປະເພດ ກ

2. ປະເພດ
   - ກ ມີ 4
   - ຂ ມີ 1
   - ຄ ມີ 0

   ໃຫ້ຈັດເປັນປະເພດ ກ

3. ປະເພດ
   - ກ ມີ 2
   - ຂ ມີ 3
   - ຄ ມີ 0

   ໃຫ້ຈັດເປັນປະເພດ ຂ

4. ປະເພດ
   - ກ ມີ 3
   - ຂ ມີ 1
   - ຄ ມີ 1

   ໃຫ້ຈັດເປັນປະເພດ ຂ

5. ປະເພດ
   - ກ ມີ 2
   - ຂ ມີ 2
   - ຄ ມີ 1

   ໃຫ້ຈັດເປັນປະເພດ ຄ

6. ປະເພດ
   - ກ ມີ 4
   - ຂ ມີ 0
   - ຄ ມີ 0
   - ນປພ ມີ 1 ນປພ

   ໃຫ້ຈັດເປັນ ຄ ນອກປະເພດ

7. ປະເພດ
   - ກ ມີ 3
   - ຂ ມີ 0
   - ຄ ມີ 1
   - ນປພ ມີ 1 ນປພ

   ໃຫ້ຈັດເປັນ ນອກປະເພດ

8. ປະເພດ
   - ກ ມີ 3
   - ຂ ມີ 0
   - ຄ ມີ 0
   - ນປພ ມີ 2 ນປພ

   ໃຫ້ຈັດເປັນ ນອກປະເພດ